**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ **298** /ລບ
ນະຄອນຫຼວງວຽງຈັນ, ວັນທີ **05-06-2024**

# ດຳລັດ
# ວ່າດ້ວຍທ່າບົກ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍການຂົນສົ່ງຫຼາຍຮູບແບບ ສະບັບເລກທີ 28/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໜັງສືສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 102/ຍທຂ, ລົງວັນທີ 26 ກຸມພາ 2024.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການຄຸ້ມຄອງ, ຕິດຕາມ, ກວດກາ ການດຳເນີນກິດຈະການຂອງທ່າບົກ ເພື່ອເຮັດໃຫ້ ການນຳເຂົ້າ-ສົ່ງອອກສິນຄ້າ ລະຫວ່າງປະເທດ ແລະ ຜ່ານແດນ ລວມທັງ ການເຄື່ອນຍ້າຍສິນຄ້າ ມີປະສິດທິພາບ ແລະ ປະສິດທິຜົນ, ການບໍລິການດ້ານຄົມມະນາຄົມ-ຂົນສົ່ງ ມີຄວາມສະດວກ, ວ່ອງໄວ, ປອດໄພ, ໂລ່ງລ່ຽນ, ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມແນໃສ່ດຶງດູດ ແລະ ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ, ຮັບປະກັນການເຊື່ອມໂຍງ, ເຊື່ອມຈອດກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ທ່າບົກ**

ທ່າບົກ ຊື່ພາສາສາກົນ ເອີ້ນວ່າ "Dry Port" ແມ່ນ ສູນໂລຈິດສະຕິກໜຶ່ງ ທີ່ມີການເຊື່ອມຕໍ່ກັບໜຶ່ງ ຫຼື ຫຼາຍຮູບແບບການຂົນສົ່ງ ເພື່ອການ ຮັບ-ສົ່ງ, ເຕົ້າໂຮມ, ເກັບຮັກສາ, ຍົກຍໍ, ຄ່ຽນຖ່າຍ, ແຈກຢາຍ ແລະ ມີການກວດກາການເຄື່ອນຍ້າຍສິນຄ້າ ໂດຍເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ອື່ນທີ່ກ່ຽວຂ້ອງ ໃນຂະບວນການຄ້າສາກົນ ໂດຍສອດຄ່ອງກັບ ກົດໝາຍ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໂລຊິດສະຕິກ** (Logistics) ໝາຍເຖິງ ລະບົບການຄຸ້ມຄອງບໍລິຫານຂະບວນການເຄື່ອນຍ້າຍສິນຄ້າທີ່ມີການວາງແຜນ, ຄວບຄຸມ, ເກັບຮັກສາ, ຫຸ້ມຫໍ່, ຄ່ຽນຖ່າຍ, ຂົນສົ່ງ, ບໍລິການ ແລະ ສະໜອງຂໍ້ມູນຂ່າວສານທີ່ກ່ຽວຂ້ອງທີ່ມີປະສິດທິພາບ ແລະ ປະສິດທິຜົນ ຈາກຕົ້ນທາງໄປຍັງປາຍທາງ ຕາມຄວາມຕ້ອງການຂອງລູກຄ້າຢ່າງເປັນຕ່ອງໂສ້;

2. **ສິນຄ້າ** ໝາຍເຖິງ ວັດຖຸ, ສິ່ງຂອງ, ພືດ, ສັດ, ສັດນ້ຳ, ຜະລິດຕະພັນອື່ນ ເພື່ອຕອບສະໜອງຄວາມຕ້ອງການ ຫຼື ຄວາມຈຳເປັນຂອງຜູ້ຊົມໃຊ້ ຊຶ່ງມີຄຸນຄ່າທາງດ້ານເສດຖະກິດ;

3. **ການຄ້າສາກົນ** (International Trade) ໝາຍເຖິງ ການນຳເອົາສິນຄ້າ ເຂົ້າມາ ຫຼື ສົ່ງອອກ ຈາກ ສປປ ລາວ ລວມທັງການນຳເຂົ້າຊົ່ວຄາວ, ການສົ່ງອອກຊົ່ວຄາວ ແລະ ການຜ່ານແດນ;

4. **ລານຕູ້ສິນຄ້າ** (Container Yard) ໝາຍເຖິງ ສະຖານທີ່ເກັບຮັກສາ ແລະ ສ້ອມແປງຕູ້ສິນຄ້າ;

5. **ຜູ້ພັດທະນາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນໃຫ້ພັດທະນາທ່າບົກຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

6. **ຜູ້ລົງທຶນກິດຈະການ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນກິດຈະການໃດໜຶ່ງ ຢູ່ພື້ນທີ່ໃນຂອບເຂດຂອງທ່າບົກຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານທ່າບົກ**

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການສາມາດເຂົ້າເຖິງແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອລົງທຶນເຂົ້າໃນການພັດທະນາທ່າບົກ ແລະ ພື້ນທີ່ໃນຂອບເຂດຂອງທ່າບົກ ແນໃສ່ສ້າງຄວາມເຂັ້ມແຂງໃນການພັດທະນາການຂົນສົ່ງສິນຄ້າ ແລະ ໂລຊິດສະຕິກ ໃຫ້ເຊື່ອມໂຍງ ແລະ ເຊື່ອມຈອດກັບ ພາກພື້ນ ແລະ ສາກົນ.

ລັດ ເອົາໃຈໃສ່ພັດທະນາວຽກງານທ່າບົກ ໃນຮູບການ ລັດລົງທຶນ ດ້ວຍການສ້າງບຸກຄະລາກອນ, ສ້າງໂຄງລ່າງພື້ນຖານ, ສະໜອງງົບປະມານ ແລະ ວັດຖຸປະກອນທີ່ຈຳເປັນພ້ອມທັງສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ວຽກງານດັ່ງກ່າວດຳເນີນໄປ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານທ່າບົກ**

ການເຄື່ອນໄຫວວຽກງານທ່າບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການພັດທະນາໂລຊິດສະຕິກຂົນສົ່ງສິນຄ້າຂອງ ສປປ ລາວ, ສົນທິສັນຍາ ທີ່ ສປປ ລາວເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

2. ຮັບປະກັນການຄຸ້ມຄອງດ້ວຍກົດໝາຍເພື່ອແນໃສ່ການບໍລິການ ໃຫ້ມີຄວາມສະດວກ, ວ່ອງໄວ, ປອດໄພ, ໂລ່ງລ່ຽນ, ທັນສະໄໝ, ໂປ່ງໃສ, ກວດສອບໄດ້, ໄດ້ມາດຕະຖານສາກົນ ແລະ ເປັນມິດກັບສິ່ງແວດລ້ອມ;

3. ຄຸ້ມຄອງວຽກງານທ່າບົກ ດ້ວຍການປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມພັດທະນາ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານທ່າບົກ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານທ່າບົກ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ ແລະ ປະສົບການໃນການພັດທະນາ ແລະ ຄຸ້ມຄອງທ່າບົກໂດຍສອດຄ່ອງກັບ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

# ໝວດທີ 2
## ການກຳນົດຈຸດທີ່ຕັ້ງ, ມາດຕະຖານ ແລະ ການເຂົ້າ-ອອກ ທ່າບົກ

**ມາດຕາ 8 ຈຸດທີ່ຕັ້ງຂອງທ່າບົກ**

ທີ່ຕັ້ງຂອງທ່າບົກ ຢູ່ ສປປ ລາວ ແມ່ນອີງຕາມສົນທິສັນຍາລະຫວ່າງລັດຖະບານວ່າດ້ວຍທ່າບົກ ຂອງຄະນະກຳມາທິການອົງການສະຫະປະຊາຊາດດ້ານເສດຖະກິດ ແລະ ສັງຄົມ ປະຈຳພາກພື້ນອາຊີ-ປາຊີຟິກ (UNESCAP Intergovernmental Agreement on Dry Port).

ທ່າບົກ ອາດຕັ້ງຢູ່ໃກ້ກັບ ດ່ານສາກົນ, ເຂດຍຸດທະສາດຂອງ ແຂວງ, ນະຄອນຫຼວງ, ເຂດການຄ້າ, ອຸດສາຫະກຳ, ກະສິກຳ, ເຂດເສດຖະກິດ ແລະ ອື່ນໆ ທີ່ສາມາດເຊື່ອມຈອດກັບ ທາງຫຼວງ, ທາງລົດໄຟ, ທ່າເຮືອ ແລະ ສະໜາມບິນສາກົນ ໂດຍອີງຕາມການຮັບຮອງຜົນການສຶກສາຄວາມເປັນໄປໄດ້ ດ້ານເສດຖະກິດ-ເຕັກນິກ ແລະ ທີ່ຕັ້ງ ຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ຕ້ອງປະຕິບັດຕາມສິດ ແລະ ໜ້າທີ່ ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າຈຸດທີ່ຕັ້ງຂອງທ່າບົກ ໂດຍປະສານສົມທົບກັບກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວສະເໜີລັດຖະບານພິຈາລະນາ.

**ມາດຕາ 9 ມາດຕະຖານຂອງທ່າບົກ**

ທ່າບົກ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີເນື້ອທີ່ ແຕ່ເຈັດເຮັກຕາຂຶ້ນໄປ;
2. ມີໂຄງລ່າງພື້ນຖານທາງດ້ານເຕັກນິກ;
3. ມີກົນຈັກພາຫະນະ ແລະ ອຸປະກອນ;
4. ມີລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
5. ມີລະບົບຄວາມປອດໄພ;
6. ມີສິ່ງອຳນວຍຄວາມສະດວກອື່ນທີ່ຈຳເປັນ.

**ມາດຕາ 10 ໂຄງລ່າງພື້ນຖານທາງດ້ານເຕັກນິກທີ່ຈຳເປັນຂອງທ່າບົກ**

ໂຄງລ່າງພື້ນຖານທາງດ້ານເຕັກນິກທີ່ຈຳເປັນຂອງທ່າບົກ ມີດັ່ງນີ້:

1. ປະຕູເຂົ້າ-ອອກ ແລະ ຮົ້ວອ້ອມຮອບ;
2. ເສັ້ນທາງພາຍໃນທີ່ສາມາດເຊື່ອມຕໍ່ກັບການຂົນສົ່ງຫຼາຍຮູບແບບ;
3. ເຂດກວດກາດ້ວຍເຄື່ອງສາຍລັງສີ (X-Ray);
4. ລານກວດກາສຳລັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ (Inspection Yard);
5. ອາຄານຫ້ອງການບໍລິການ ສຳລັບເຈົ້າໜ້າທີ່ ທີ່ຈຳເປັນ, ຜູ້ຈັດສົ່ງ, ຜູ້ສົ່ງ, ນາຍໜ້າ, ທະນາຄານ, ປະກັນໄພ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;
6. ຫ້ອງການຄຸ້ມຄອງ ແລະ ບໍລິການທ່າບົກ (Administration Office);
7. ຫ້ອງປະຖົມພະຍາບານເບື້ອງຕົ້ນ (First Aid Room);
8. ສະຖານທີ່ຄັດແຍກສິນຄ້າ (Cross DockingArea);
9. ສາງສິນຄ້າກາງແຈ້ງ ແລະ ສາງສິນຄ້າໃນຮົ່ມ;
10. ພື້ນທີ່ເຕົ້າໂຮມ ແລະ ບັນຈຸສິນຄ້າ (Less Container Load Area);
11. ລານຈອດລົດບັນທຸກ (Truck Park ing Yard);
12. ລານຕູ້ສິນຄ້າ (Container Yard);
13. ພື້ນທີ່ບຳບັດ (Treatment Area);
14. ພື້ນທີ່ເກັບຮັກສາສິນຄ້າອັນຕະລາຍ (Dangerous Goods Storage Area);

15. ຈຸດຊີງຊຸ້ງນໍ້າໜັກ.

ນອກຈາກນີ້, ຍັງມີໂຄງລ່າງພື້ນຖານທາງດ້ານເຕັກນິກອື່ນທີ່ຈຳເປັນ ຊຶ່ງຂຶ້ນກັບຂະໜາດ ແລະ ຈຸດພິເສດຂອງແຕ່ລະທ່າບົກ.

**ມາດຕາ 11 ຍານພາຫະນະກົນຈັກ ແລະ ອຸປະກອນຢູ່ທ່າບົກ**

ຍານພາຫະນະກົນຈັກ ແລະ ອຸປະກອນຢູ່ທ່າບົກ ມີດັ່ງນີ້:

1. ລົດຍົກຍໍ (Fork Lift);
2. ລົດຄີບຕູ້ສິນຄ້າ (Reach Stacker);
3. ເຄື່ອງຍົກຕູ້ສິນຄ້າຂະໜາດໃຫຍ່ (Gantry Crane);
4. ຖ້ານຮອງຮັບສິນຄ້າຂະໜາດໃຫຍ່ (Heavy Duty Shelf Super Rack);
5. ຖ້ານຮອງສິນຄ້າ (Pallet);
6. ເຄື່ອງກວດກາສິນຄ້າດ້ວຍລະບົບX-Ray;
7. ຕູ້ສິນຄ້າ (Container);
8. ອຸປະກອນ ກວດກາ, ອີໄຈ, ບຳບັດພະຍາດ ສັດ-ພືດ ແລະ ຜະລິດຕະພັນສັດ.

ນອກຈາກນີ້, ຍັງມີພາຫະນະກົນຈັກ ແລະ ອຸປະກອນອື່ນທີ່ມີຄວາມຈຳເປັນ ຊຶ່ງຂຶ້ນກັບຂະໜາດ ແລະ ຈຸດພິເສດຂອງແຕ່ລະທ່າບົກ.

**ມາດຕາ 12 ລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ**

ລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານທີ່ທັນສະໄໝສຳລັບທ່າບົກ ມີ ດັ່ງນີ້:

1. ລະບົບອ່ານຂໍ້ມູນດ້ວຍເອເລັກໂຕຣນິກ (Electronic Date Reading System);
2. ລະບົບຕິດຕາມພາຫະນະ ແລະ ຕູ້ສິນຄ້າ (Vehicle and Container Tracking System,GPS);
3. ລະບົບການເງິນຜ່ານທະນາຄານດ້ວຍເຄື່ອງເອເລັກໂຕຣນິກ (E-Banking);
4. ລະບົບຄິດໄລ່ ແລະ ຈ່າຍຄ່າບໍລິການ (Calculation and Payment System);
5. ລະບົບບັນຊີແບບອອນລາຍ (Online Accounting);
6. ລະບົບແຈ້ງພາສີແບບເອເລັກໂຕຣນິກ (Automated System for Customs Data);
7. ໂຄງລ່າງພື້ນຖານທາງດ້ານຂ່າວສານເຕັກໂນໂລຊີ (Information Technology Infrastructure);
8. ລະບົບຄຸ້ມຄອງພະນັກງານ (Staff Management System);
9. ລະບົບຄຸ້ມຄອງການຄ່ຽນຖ່າຍ, ບັນຈຸ ແລະ ຄວບຄຸມການເຄື່ອນຍ້າຍສິນຄ້າ;
10. ລະບົບຄຸ້ມຄອງບໍລິຫານທ່າບົກ ແລະ ສະຫຼຸບ ລາຍງານ ແບບອັດຕະໂນມັດ (Dry Port Operating and Reporting System);
11. ລະບົບຄຸ້ມຄອງສາງສິນຄ້າ (Warehouse Management System);
12. ລະບົບຄຸ້ມຄອງການແຈກຢາຍສິນຄ້າ (Distribution Management System).

ນອກຈາກນີ້, ຍັງມີລະບົບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ທີ່ມີຄວາມຈຳເປັນຊຶ່ງຂຶ້ນກັບຂະໜາດ ແລະ ຈຸດພິເສດຂອງແຕ່ລະທ່າບົກ.

**ມາດຕາ 13 ລະບົບຄວາມປອດໄພ**

ລະບົບຄວາມປອດໄພທີ່ຈຳເປັນສຳລັບທ່າບົກ ມີດັ່ງນີ້:

1. ລະບົບກ້ອງວົງຈອນປິດ;
2. ລະບົບປ້ອງກັນຄວາມປອດໄພ;
3. ລະບົບປ້ອງກັນອັກຄີໄພ;
4. ລະບົບຮັກສາຄວາມປອດໄພ;

5. ລະບົບກັນຟ້າຜ່າ.

ນອກຈາກນີ້, ຍັງມີລະບົບຄວາມປອດໄພອື່ນທີ່ມີຄວາມຈຳເປັນ ຊຶ່ງຂຶ້ນກັບຂະໜາດ ແລະ ຈຸດພິເສດຂອງແຕ່ລະທ່າບົກ.

**ມາດຕາ 14 ການເຂົ້າ-ອອກທ່າບົກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດ ເສັ້ນທາງ, ຍານພາຫະນະຂົນສົ່ງ ທີ່ເຂົ້າ-ອອກທ່າບົກ ແລະ ສາຍທາງຂົນສົ່ງສິນຄ້າ ໄປຫາຈຸດໝາຍປາຍທາງຂອງການຂົນສົ່ງຫຼາຍຮູບແບບ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດຂັ້ນຕອນການດຳເນີນງານ ໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ຮູບການ ການລົງທຶນພັດທະນາທ່າບົກ

**ມາດຕາ 15 ຮູບການ ການລົງທຶນພັດທະນາທ່າບົກ**

ການລົງທຶນພັດທະນາທ່າບົກມີສາມຮູບການ ດັ່ງນີ້:

1. ລັດ ລົງທຶນຮ້ອຍສ່ວນຮ້ອຍ;
2. ລັດ ຮ່ວມທຶນ ກັບເອກະຊົນ;
3. ເອກະຊົນ ລົງທຶນ ຮ້ອຍສ່ວນຮ້ອຍ.

ລັດຖະບານສາມາດເຂົ້າຖືຮຸ້ນໃນກິດຈະການສຳປະທານ ຕາມແຕ່ລະກໍລະນີທີ່ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 16 ລັດ ລົງທຶນ ຮ້ອຍສ່ວນຮ້ອຍ**

ລັດ ລົງທຶນ ຮ້ອຍສ່ວນຮ້ອຍ ແມ່ນ ການລົງທຶນຂອງລັດຖະບານ ສປປ ລາວ ແຕ່ພຽງຜູ້ດຽວ ເພື່ອພັດທະນາທ່າບົກ.

**ມາດຕາ 17 ລັດ ຮ່ວມທຶນ ກັບເອກະຊົນ**

ລັດ ຮ່ວມທຶນ ກັບເອກະຊົນ ແມ່ນ ການລົງທຶນ ລະຫວ່າງ ລັດຖະບານ ສປປ ລາວ ຮ່ວມກັບເອກະຊົນພາຍໃນ, ເອກະຊົນ ຫຼື ລັດວິສາຫະກິດຕ່າງປະເທດ ເພື່ອພັດທະນາທ່າບົກ ຢູ່ ສປປ ລາວ.

**ມາດຕາ 18 ເອກະຊົນ ລົງທຶນຮ້ອຍສ່ວນຮ້ອຍ**

ເອກະຊົນລົງທຶນຮ້ອຍສ່ວນຮ້ອຍ ແມ່ນການລົງທຶນຂອງເອກະຊົນໂດຍຜູ້ລົງທຶນຜູ້ດຽວ ຫຼື ມີການຮ່ວມທຶນກັນ ເພື່ອພັດທະນາທ່າບົກ ຢູ່ ສປປ ລາວ.

ໃນກໍລະນີມີການລົງທຶນຮ່ວມຂອງຕ່າງປະເທດ ການຖືຮຸ້ນຂອງຕ່າງປະເທດນັ້ນ ບໍ່ໃຫ້ເກີນສີ່ສິບເກົ້າສ່ວນຮ້ອຍ (49%).

## ໝວດທີ 4
## ການຂໍອະນຸຍາດພັດທະນາທ່າບົກ

**ມາດຕາ 19 ການສະເໜີຂໍອະນຸຍາດພັດທະນາທ່າບົກ**

ນິຕິບຸກຄົນ ທີ່ມີຈຸດປະສົງພັດທະນາທ່າບົກບ່ອນທີ່ລັດຖະບານກຳນົດ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດພັດທະນາຕາມແບບພິມຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ໃນກໍລະນີ ມີຜູ້ຕ້ອງການພັດທະນາທ່າບົກແຕ່ສອງຄົນຂຶ້ນໄປ ໃຫ້ດຳເນີນການຄັດເລືອກຜູ້ພັດທະນາດ້ວຍຮູບການປະມູນ.

**ມາດຕາ 20 ເງື່ອນໄຂຂອງຜູ້ທີ່ຈະພັດທະນາທ່າບົກ**

ຜູ້ທີ່ຈະສະເໜີ ພັດທະນາທ່າບົກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;

2. ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນພາຍໃນ ຫຼື ຕ່າງປະເທດ;

3. ມີບຸກຄະລາກອນທີ່ມີປະສົບການ ກ່ຽວກັບວຽກງານໂລຊິດສະຕິກ ຫຼື ຂົນສົ່ງສິນຄ້າ;

4. ມີການປະສານສົມທົບ, ພົວພັນທາງດ້ານການຄ້າ, ແຫຼ່ງສິນຄ້າທັງພາຍໃນ ແລະ ສາກົນ;

5. ມີທີ່ປຶກສາ ຫຼື ບໍລິສັດທີ່ປຶກສາ ທີ່ຈະສຶກສາຄວາມເປັນໄປໄດ້ໃນການພັດທະນາທ່າບົກ ທີ່ໄດ້ຮັບອະນຸຍາດ ຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;

6. ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ.

**ມາດຕາ 21 ເອກະສານປະກອບຂໍອະນຸຍາດພັດທະນາທ່າບົກ**

ເອກະສານປະກອບຂໍອະນຸຍາດພັດທະນາທ່າບົກ ມີດັ່ງນີ້:

1. ຄໍາຮ້ອງຂໍອະນຸຍາດພັດທະນາທ່າບົກ;

2. ປະຫວັດ ແລະ ປະສົບການຂອງຜູ້ທີ່ຈະພັດທະນາ;

3. ໃບທະບຽນວິສາຫະກິດ;

4. ສັນຍາຮ່ວມທຸລະກິດ (ຖ້າມີ);

5. ໃບມອບສິດໃຫ້ຜູ້ຕາງໜ້າບັນດາຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດໃນກໍລະນີບຸກຄົນດັ່ງກ່າວ ບໍ່ຢູ່ໃນຕໍາແໜ່ງສູງສຸດຂອງບໍລິສັດ;

6. ບົດສະເໜີການສຶກສາຄວາມເປັນໄປໄດ້ໃນການພັດທະນາທ່າບົກ;

7. ໃບຢັ້ງຢືນ ທີ່ປຶກສາ ຫຼື ບໍລິສັດທີ່ປຶກສາ ທີ່ຈະສຶກສາຄວາມເປັນໄປໄດ້ໃນການພັດທະນາທ່າບົກ;

8. ໃບຢັ້ງຢືນການມອບພັນທະອາກອນປະຈໍາປີ;

9. ໃບຢັ້ງຢືນຖານະການເງິນ ຫຼື ເອກະສານສະໜັບສະໜູນຈາກສະຖາບັນການເງິນ;

10.ກົດລະບຽບບໍລິສັດ ຕາມຮູບແບບທີ່ກໍານົດ.

**ມາດຕາ 22 ຂັ້ນຕອນການອະນຸຍາດພັດທະນາທ່າບົກ**

ການອະນຸຍາດພັດທະນາທ່າບົກ ມີຂັ້ນຕອນ ດັ່ງນີ້:

1. ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະນຸຍາດພັດທະນາທ່າບົກ ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງຄົ້ນຄວ້າໂດຍປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວສະເໜີຕໍ່ ກະຊວງແຜນການ ແລະ ການລົງທຶນ;

2. ກະຊວງແຜນການ ແລະ ການລົງທຶນ ຄົ້ນຄວ້າ ແລະ ນໍາສະເໜີຕໍ່ລັດຖະບານ ເພື່ອພິຈາລະນາອະນຸມັດລົງນາມບົດບັນທຶກຄວາມເຂົ້າໃຈສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາທ່າບົກ;

3. ພາຍຫຼັງໄດ້ຮັບການພິຈາລະນາເຫັນດີຈາກ ລັດຖະບານ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກໍານົດໜ້າວຽກແລ້ວ ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ລົງນາມບົດບັນທຶກຄວາມເຂົ້າໃຈສຶກສາຄວາມເປັນໄປໄດ້;

4. ຜູ້ພັດທະນາທ່າບົກ ດໍາເນີນການສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາທ່າບົກ ໂດຍສອດຄ່ອງກັບການກໍານົດໜ້າວຽກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ໃຫ້ສໍາເລັດພາຍໃນກໍານົດເວລາ ສິບສອງເດືອນ;

5. ຜູ້ພັດທະນາທ່າບົກ ດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລ້ວສະເໜີ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຮັບຮອງຕາມກົດໝາຍ;

6. ກະຊວງໂຍທາທິການ ແລະ ຂົນສົ່ງ ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການສຶກສາຄວາມເປັນໄປໄດ້ກ່ຽວກັບການພັດທະນາທ່າບົກ;

7. ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ເຈລະຈາສັນຍາສຳປະທານ ລວມທັງການເຂົ້າຖືຮຸ້ນຂອງລັດ ເພື່ອສະເໜີລັດຖະບານພິຈາລະນາອະນຸມັດລົງນາມສັນຍາສຳປະທານ;

8. ຜູ້ພັດທະນາທ່າບົກ ຕ້ອງສ້າງຕັ້ງບໍລິສັດໂຄງການ ແລະ ຂໍອະນຸຍາດດຳເນີນທຸລະກິດ ຕາມກົດໝາຍທີ່ກ່ຽວຂ້ອງ.

ສຳລັບກຳນົດເວລາໃນການພິຈາລະນາແຕ່ລະຂັ້ນຕອນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 23 ການໃຫ້ບໍລິການຂອງຜູ້ພັດທະນາທ່າບົກ**

ການໃຫ້ບໍລິການຂອງຜູ້ພັດທະນາທ່າບົກ ມີດັ່ງນີ້:

1. ຮັບ ແລະ ສົ່ງສິນຄ້າ;
2. ເຕົ້າໂຮມ ແລະ ແຈກຢາຍສິນຄ້າ;
3. ຍົກຍໍ-ຄ່ຽນຖ່າຍສິນຄ້າ;
4. ເກັບຮັກສາ ແລະ ໃຫ້ບໍລິການຕູ້ສິນຄ້າ;
5. ລະບົບສາງ;
6. ແຈ້ງພາສີ;
7. ແຈ້ງກວດກາພືດ-ສັດ;
8. ລະບົບ ການບໍລິການທະນາຄານ ແລະ ປະກັນໄພ;
9. ກິດຈະການອື່ນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

ຜູ້ພັດທະນາທ່າບົກສາມາດໃຫ້ການບໍລິການ ຕາມ ຂໍ້ 1 ຫາ ຂໍ້ 4, ສ່ວນການໃຫ້ບໍລິການ ຕາມ ຂໍ້ 5 ຫາ ຂໍ້ 8 ຕ້ອງໄດ້ຂໍອະນຸຍາດນຳຂະແໜງການທີ່ກ່ຽວຂ້ອງ.

ສິນຄ້າຜ່ານແດນ ຜ່ານ ສປປ ລາວ ໄປປະເທດທີສາມ ບໍ່ຈຳເປັນຜ່ານທ່າບົກ, ແຕ່ຜ່ານການກວດກາຂອງເຈົ້າໜ້າທີ່ພາສີຢູ່ດ່ານຊາຍແດນ ຫຼື ບ່ອນທີ່ລັດຖະການພາສີກຳນົດ.

**ມາດຕາ 24 ສິດຂອງຜູ້ພັດທະນາ**

ຜູ້ພັດທະນາ ມີສິດ ດັ່ງນີ້:

1. ໄດ້ຮັບການສົ່ງເສີມ ແລະ ອຳນວຍຄວາມສະດວກ ໃນການພັດທະນາທ່າບົກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍ ອື່ນທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳທີ່ໄດ້ມາຈາກການລົງທຶນພັດທະນາທ່າບົກທີ່ຕົນໄດ້ຮັບອະນຸຍາດ;
3. ຄັດເລືອກ ແລະ ເຮັດສັນຍາ ດຳເນີນທຸລະກິດກັບຜູ້ລົງທຶນກິດຈະການ;
4. ໄດ້ຮັບຜົນປະໂຫຍດຈາກການໃຫ້ເຊົ່າໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
5. ນຳໃຊ້ທີ່ດິນຕາມອາຍຸສັນຍາສຳປະທານໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ;
6. ເປັນເຈົ້າກຳມະສິດຕໍ່ຊັບສິນທີ່ຕົນໄດ້ພັດທະນາຢູ່ໃນທ່າບົກເປັນຕົ້ນ ອາຄານ, ສິ່ງປຸກສ້າງ, ພາຫະນະກົນຈັກ;
7. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 25 ພັນທະຂອງຜູ້ພັດທະນາ**

ຜູ້ພັດທະນາມີ ພັນທະ ດັ່ງນີ້:

1. ປະຕິບັດຕາມສັນຍາພັດທະນາ, ແຜນແມ່ບົດພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມ;

2. ເສຍພາສີ, ອາກອນ, ຄ່າເຊົ່າ ຫຼື ສຳປະທານທີ່ດິນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຢ່າງຄົບຖ້ວນຕາມສັນຍາພັດທະນາ, ກົດໝາຍ ແລະ ລະບຽບການ;

3. ໃຫ້ການຮ່ວມມືກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ປະກອບສ່ວນໃນການພັດທະນາທ້ອງຖິ່ນ ເປັນຕົ້ນ ການບູລະນະຮັກສາທາງຫຼວງ, ການປູກຈິດສຳນຶກດ້ານຄວາມປອດໄພຕາມທາງຫຼວງ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານສາທາລະນະສຸກ, ການແກ້ໄຂເຫດການສຸກເສີນ;

4. ຖືບັນຊີຕາມ ກົດໝາຍວ່າດ້ວຍການບັນຊີ ໃນກໍລະນີຈຳເປັນກໍສາມາດນຳໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນ;

5. ນຳໃຊ້, ພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ເຕັກໂນໂລຊີໃຫ້ແກ່ຜູ້ອອກແຮງງານລາວ ໂດຍສະເພາະເພດຍິງ ແລະ ຊົນເຜົ່າ;

6. ເຂົ້າລະບົບປະກັນສັງຄົມ;

7. ທົດແທນຄ່າເສຍຫາຍ ທີ່ເກີດຈາກຄວາມຜິດພາດໃນການໃຫ້ບໍລິການຂອງຕົນ ຕາມມູນຄ່າຂອງສິນຄ້າ;

8. ສະຫຼຸບ ແລະ ລາຍງານ ບັນດາສະຖິຕິ ແລະ ການດຳເນີນທຸລະກິດຂອງຕົນ ຕໍ່ຄະນະຄຸ້ມຄອງທ່າບົກ, ຫ້ອງການການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 ການສະເໜີຂໍລະຫັດທ່າບົກ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າພິຈາລະນາ ກ່ຽວກັບ ເງື່ອນໄຂ, ມາດຕະຖານ ຂອງທ່າບົກ ເພື່ອສະເໜີຂຶ້ນທະບຽນລະຫັດທ່າບົກ ນຳ ຄະນະກຳມາທິການເສດຖະກິດແຫ່ງສະຫະປະຊາຊາດ ສຳລັບເອີລົບ (UNECE) ຫຼື ອົງການສາກົນ ທີ່ໄດ້ຮັບສິດ ອອກລະຫັດທ່າບົກ.

ພາຍຫຼັງໄດ້ລະຫັດແລ້ວ ທ່າບົກດັ່ງກ່າວ ສາມາດໃຫ້ບໍລິການໂລຊິດສະຕິກ ແລະ ຂົນສົ່ງສິນຄ້າໄປສູ່ສາກົນໄດ້.

## ໝວດທີ 5
## ການລົງທຶນກິດຈະການຢູ່ໃນຂອບເຂດຂອງທ່າບົກ

**ມາດຕາ 27 ປະເພດການລົງທຶນກິດຈະການ**

ປະເພດການລົງທຶນກິດຈະການ ຢູ່ໃນຂອບເຂດຂອງທ່າບົກ ມີດັ່ງນີ້:

1. ສາງສິນຄ້າ;
2. ສະຖານີຄ່ຽນຖ່າຍສິນຄ້າ;
3. ສະຖານີລົດຂົນສົ່ງສິນຄ້າ;
4. ລານຕູ້ສິນຄ້າ;
5. ສູນສ້ອມແປງຕູ້ສິນຄ້າ;
6. ການຫຸ້ມຫໍ່;
7. ການຂ້າເຊື້ອພະຍາດ;
8. ກິດຈະການອື່ນ.

**ມາດຕາ 28 ການສະເໜີຂໍລົງທຶນກິດຈະການ**

ນິຕິບຸກຄົນ ທີ່ມີຈຸດປະສົງລົງທຶນກິດຈະການຢູ່ໃນຂອບເຂດທ່າບົກ ໃຫ້ສະເໜີຕໍ່ຄະນະຄຸ້ມຄອງທ່າບົກ ເພື່ອຄົ້ນຄວ້າພິຈາລະນາ.

ສຳລັບຜູ້ພັດທະນາ ທີ່ມີຈຸດປະສົງລົງທຶນກິດຈະການໃດໜຶ່ງ ໃນທ່າບົກທີ່ຕົນພັດທະນາ ທີ່ບໍ່ນອນໃນການໃຫ້ບໍລິການຕາມທີ່ກຳນົດໄວ້ໃນ ມາດຕາ 23 ຂອງດຳລັດສະບັບນີ້ ຕ້ອງສ້າງເປັນນິຕິບຸກຄົນໃໝ່ ແລະ ໃຫ້ປະຕິບັດຕາມ ໝວດທີ 5 ຂອງດຳລັດສະບັບນີ້.

**ມາດຕາ 29 ເງື່ອນໄຂຜູ້ລົງທຶນກິດຈະການ**

ຜູ້ລົງທຶນກິດຈະການຢູ່ໃນຂອບເຂດຂອງທ່າບົກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ມີສັນຍາດຳເນີນທຸລະກິດກັບຜູ້ພັດທະນາ;
3. ໄດ້ຮັບອະນຸຍາດການດຳເນີນທຸລະກິດຈາກຂະແໜງການທີ່ກ່ຽວຂ້ອງ;
4. ມີບຸກຄະລາກອນທີ່ມີຄວາມຮູ້ ແລະ ປະສົບການ ກ່ຽວກັບກິດຈະການທີ່ຈະໃຫ້ບໍລິການນັ້ນ;
5. ມີທຶນພຽງພໍທີ່ເໝາະສົມກັບປະເພດ ແລະ ຂະໜາດຂອງກິດຈະການ;
6. ມີອຸປະກອນ, ເຄື່ອງມື ແລະ ຍານພາຫະນະທີ່ໄດ້ມາດຕະຖານ, ທັນສະໄໝ ແລະ ເໝາະສົມກັບຂະໜາດຂອງກິດຈະການ;
7. ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ.

**ມາດຕາ 30 ເອກະສານປະກອບຂໍອະນຸຍາດລົງທຶນກິດຈະການທ່າບົກ**

ເອກະສານປະກອບຂໍອະນຸຍາດລົງທຶນກິດຈະການຢູ່ໃນຂອບເຂດທ່າບົກ ມີດັ່ງນີ້:

1. ໜັງສືສະເໜີຂໍລົງທຶນ;
2. ໃບທະບຽນວິສາຫະກິດ;
3. ສັນຍາດຳເນີນທຸລະກິດກັບຜູ້ພັດທະນາ;
4. ໃບອະນຸຍາດດຳເນີນທຸລະກິດ;
5. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນທຸລະກິດ;
6. ກົດລະບຽບພາຍໃນຂອງວິສາຫະກິດ;
7. ເອກະສານຢັ້ງຢືນຖານະການເງິນຈາກສະຖາບັນການເງິນ.

**ມາດຕາ 31 ສິດຂອງຜູ້ລົງທຶນກິດຈະການ**

ຜູ້ລົງທຶນກິດຈະການ ມີ ສິດ ດັ່ງນີ້:

1. ໄດ້ຮັບການສົ່ງເສີມແລະອຳນວຍຄວາມສະດວກຈາກລັດ ແລະ ຜູ້ພັດທະນາໃນການລົງທຶນກິດຈະການຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງການລົງທຶນດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳທີ່ໄດ້ມາຈາກການລົງທຶນກິດຈະການຂອງຕົນ;
3. ນຳໃຊ້ທີ່ດິນຕາມສັນຍາລົງທຶນກິດຈະການ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ເປັນເຈົ້າກຳມະສິດຕໍ່ຊັບສິນໃນການລົງທຶນກິດຈະການຂອງຕົນ;
5. ໄດ້ຮັບສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 ພັນທະຂອງຜູ້ລົງທຶນກິດຈະການ**

ຜູ້ລົງທຶນກິດຈະການ ມີ ພັນທະ ດັ່ງນີ້:

1. ດຳເນີນກິດຈະການ ຕາມການອະນຸຍາດ ແລະ ປະຕິບັດຖືກຕ້ອງ ຕາມສັນຍາກັບຜູ້ພັດທະນາ;

2. ເສຍຄ່າເຊົ່າໃຫ້ຜູ້ພັດທະນາຕາມສັນຍາ;

3. ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຢ່າງຄົບຖ້ວນຕາມສັນຍາ, ກົດໝາຍ ແລະ ລະບຽບການ;

4. ສະຫຼຸບ ແລະ ລາຍງານ ບັນດາສະຖິຕິ ແລະ ການດໍາເນີນທຸລະກິດຂອງຕົນ ຕໍ່ຜູ້ພັດທະນາທ່າບົກ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

5. ໃຫ້ການຮ່ວມມືກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

6. ທົດແທນຄ່າເສຍຫາຍ ທີ່ເກີດຈາກຄວາມຜິດພາດໃນການໃຫ້ບໍລິການຂອງຕົນ ຕາມມູນຄ່າຂອງສິນຄ້າ;

7. ປະຕິບັດພັນທະອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ.

## ໝວດທີ 6
## ການຈັດຕັ້ງທີ່ຄຸ້ມຄອງທ່າບົກ

### ມາດຕາ 33 ການຈັດຕັ້ງທີ່ຄຸ້ມຄອງທ່າບົກ

ການຈັດຕັ້ງທີ່ຄຸ້ມຄອງທ່າບົກ ປະກອບດ້ວຍ:

1. ຄະນະຄຸ້ມຄອງທ່າບົກ;
2. ໜ່ວຍງານລັດທີ່ປະຈໍາຢູ່ທ່າບົກ.

### ມາດຕາ 34 ຄະນະຄຸ້ມຄອງທ່າບົກ

ຄະນະຄຸ້ມຄອງທ່າບົກ ແມ່ນ ການຈັດຕັ້ງທີ່ບໍ່ປະຈໍາການ ຊຶ່ງສ້າງຕັ້ງຂຶ້ນເພື່ອຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບທ່າບົກ.

ຄະນະຄຸ້ມຄອງທ່າບົກ ຖືກແຕ່ງຕັ້ງ ແລະ ປົດຕໍາແໜ່ງ ໂດຍ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ຊຶ່ງປະກອບດ້ວຍ ຫົວໜ້າທີ່ເປັນຜູ້ຕາງໜ້າ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ, ຮອງຫົວໜ້າ ແລະ ຄະນະຈໍານວນໜຶ່ງ ທີ່ເປັນຜູ້ຕາງໜ້າຂະແໜງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 35 ສິດ ແລະ ໜ້າທີ່ຂອງຄະນະຄຸ້ມຄອງທ່າບົກ

ຄະນະຄຸ້ມຄອງທ່າບົກມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊຸກຍູ້ ແລະ ຕິດຕາມ ການເກັບກໍາຂໍ້ມູນ, ສະຖິຕິ ກ່ຽວກັບການພັດທະນາ, ລົງທຶນ ແລະ ດໍາເນີນທຸລະກິດຢູ່ທ່າບົກ;

2. ຊຸກຍູ້ ແລະ ຕິດຕາມ ການເຄື່ອນໄຫວວຽກງານຂອງບັນດາໜ່ວຍງານທີ່ປະຈໍາຢູ່ທ່າບົກ;

3. ຕິດຕາມກວດກາ ແລະ ຊຸກຍູ້ຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການໃຫ້ປະຕິບັດຕາມສັນຍາ ພັດທະນາ, ກົດໝາຍ ແລະ ລະບຽບການ;

4. ສະເໜີຂັ້ນເທິງ ປັບປຸງຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ທີ່ເຫັນວ່າບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

5. ສະເໜີຫາຂະແໜງການ ແລະ/ຫຼື ອົງການທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາຮັບຮອງ ຄ່າບໍລິການ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການ;

6. ຮັບ ແລະ ແກ້ໄຂຄໍາສະເໜີ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

7. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງທ່າບົກ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງທ່າບົກ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ບ່ອນທີ່ທ່າບົກຕັ້ງຢູ່ ຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 36 ໜ່ວຍງານລັດທີ່ປະຈຳຢູ່ທ່າບົກ**

ໜ່ວຍງານລັດທີ່ປະຈຳຢູ່ທ່າບົກ ມີດັ່ງນີ້:

1. ໂຍທາທິການ ແລະ ຂົນສົ່ງ;
2. ພາສີ;
3. ກັກກັນພືດ-ສັດ;
4. ອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່;
5. ກວດຄົນເຂົ້າ-ອອກເມືອງ ຕາມເງື່ອນໄຂ ຈຸດພິເສດຂອງທ່າບົກ.

ແຕ່ລະໜ່ວຍງານລັດ ໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍຂະແໜງການສາຍຕັ້ງຂອງຕົນ ເພື່ອປະຕິບັດໜ້າທີ່ປະຈຳຢູ່ແຕ່ລະທ່າບົກ.

ໜ່ວຍງານລັດທີ່ປະຈຳຢູ່ທ່າບົກ ຂຶ້ນຕາມເງື່ອນໄຂຈຸດພິເສດຂອງແຕ່ລະທ່າບົກ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງໜ່ວຍງານໂຍທາທິການ ແລະ ຂົນສົ່ງ**

ໜ່ວຍງານໂຍທາທິການ ແລະ ຂົນສົ່ງ ປະຈຳຢູ່ທ່າບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຂົ້າ-ອອກ ຍານພາຫະນະຂົນສົ່ງສິນຄ້າ ແລະ ການຜ່ານແດນຂອງຍານພາຫະນະຂົນສົ່ງສິນຄ້າ ໃຫ້ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ຕິດຕາມ ກວດກາ ການຊັ່ງນໍ້າໜັກຍານພາຫະນະຂົນສົ່ງສິນຄ້າ;
3. ຕິດຕາມ ກວດກາ ການແລ່ນຍານພາຫະນະຂົນສົ່ງສິນຄ້າຕາມສາຍທາງກຳນົດ;
4. ເກັບກຳຂໍ້ມູນສະຖິຕິ ຂອງຍານພາຫະນະຂົນສົ່ງສິນຄ້າ;
5. ກວດການມາດຕະຖານເຕັກນິກຂອງຍານພາຫະນະຂົນສົ່ງສິນຄ້າ;
6. ກວດກາຍານພາຫະນະຂົນສົ່ງສິນຄ້າ ພິເສດ ແລະ ວັດຖຸອັນຕະລາຍ;
7. ກຳນົດວິທີການ ຖ່ຽນຖ່າຍ, ສັບປ່ຽນ ຫົວລາກ-ຫາງລາກ ຕາມສັນຍາຂົນສົ່ງ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງໜ່ວຍງານໂຍທາທິການ ແລະ ຂົນສົ່ງ ໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 38 ສິດ ແລະ ໜ້າທີ່ ຂອງໜ່ວຍງານພາສີ**

ໜ່ວຍງານພາສີປະຈຳຢູ່ທ່າບົກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ ສິນຄ້າໃຫ້ວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ເກັບພາສີ ແລະ ພັນທະອື່ນທີ່ກົດໝາຍ ແລະ ລະບຽບການກຳນົດໃຫ້ລັດຖະການພາສີຮັບຜິດຊອບ;
3. ກວດກາ ແລະ ສະກັດກັ້ນທຸກການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບພາສີ;
4. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງໜ່ວຍງານພາສີໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງໜ່ວຍງານກັກກັນພືດ-ສັດ**

ໜ່ວຍງານກັກກັນພືດ-ສັດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ແລະ ສະກັດກັ້ນທຸກການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການປ້ອງກັນ ແລະ ກັກກັນພືດ ແລະ ສັດ;

2. ກວດກາ ແລະ ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ ແລະ ສົ່ງຜ່ານພືດ ແລະ ຜະລິດຕະພັນ, ແນວພັນພືດ, ຝຸ່ນ ແລະ ຢາປາບສັດຕູພືດ ລວມທັງສັດ ແລະ ຜະລິດຕະພັນສັດຢ່າງວ່ອງໄວ,ໂປ່ງໃສ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. ກວດກາ, ທົດສອບ ແລະ ວິໄຈພືດ-ສັດ, ຜະລິດຕະພັນພືດ-ສັດ, ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະການປະມົງ ແລະ ວັດຖຸຕ້ອງຄວບຄຸມເຊັ່ນຝຸ່ນ, ຢາປາບສັດຕູພືດ ແລະ ສານເຄມີຕົກຄ້າງໃນຜະລິດຕະພັນພືດ ຕາມເງື່ອນໄຂຂອງການນຳເຂົ້າ-ສົ່ງອອກ;

4. ກັກ, ແຍກປ່ຽວ, ເກັບຮັກສາຕົວຢ່າງ, ສົ່ງຕົວຢ່າງໄປວິໄຈ, ບຳບັດ, ປະຕິເສດການນຳເຂົ້າ, ສົ່ງກັບຄືນ, ທຳລາຍ ຫຼື ນຳໃຊ້ມາດຕະການອື່ນຕໍ່ ພືດ-ສັດ, ຜະລິດຕະພັນພືດ-ສັດ ແລະ ວັດຖຸທີ່ປົນເປື້ອນພະຍາດ;

5. ແຈ້ງຜູ້ນຳເຂົ້າ-ສົ່ງອອກ ຫຼື ຜູ້ປະກອບການເຮັດສຸຂານາໄມ, ສົ່ງກັບຄືນຫຼືທຳລາຍພືດ-ສັດ, ຜະລິດຕະພັນພືດ-ສັດ ແລະ ວັດຖຸອື່ນທີ່ມີສັດຕູພືດ-ສັດ;

6. ພິຈາລະນາອອກໃບຢັ້ງຢືນສຸຂານາໄມພືດ-ສັດ ສຳລັບການສົ່ງອອກ ແລະ ເອກະສານອື່ນຕາມການມອບໝາຍຂອງກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ຕາມການສະເໜີຂອງເຈົ້າຂອງສິນຄ້າ;

7. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງໜ່ວຍງານຕົນ ໃຫ້ຂັ້ນເທິງຕົນຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ສິດ ແລະ ໜ້າທີ່ ຂອງໜ່ວຍງານອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່**

ໜ່ວຍງານອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກັກກັນ ແລະ ຄວບຄຸມພະຍາດຕິດຕໍ່, ກັກກັນປິ່ນປົວ, ວິໄຈ, ສົ່ງ, ແຍກປ່ຽວ ຜູ້ຕິດເຊື້ອພະຍາດຕິດຕໍ່;

2. ເກັບກຳຂໍ້ມູນກ່ຽວກັບການກວດກາອາຫານ, ຢາ ແລະ ຜະລິດຕະພັນການແພດ, ກັກກັນ ແລະ ຄວບຄຸມພະຍາດຕິດຕໍ່;

3. ກວດກາ ແລະ ອອກໃບຢັ້ງຢືນສຸຂະພາບໃຫ້ພະນັກງານຂັບລົດ ແລະ ພະນັກງານປະຈຳລົດ ໃນກໍລະນີສົງໄສມີພະຍາດຕິດຕໍ່ ຫຼື ໃນສະພາບມີພະຍາດລະບາດຕິດຕໍ່ ເກີດຂຶ້ນຢູ່ປະເທດຮ່ວມຊາຍແດນ ຫຼື ປະເທດອື່ນ;

4. ກວດກາ ອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ນຳເຂົ້າ-ສົ່ງອອກ ແລະ ຜ່ານແດນ ຢູ່ທ່າບົກຕາມກົດໝາຍ ແລະ ລະບຽບການ;

5. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງໜ່ວຍງານອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່ ໃຫ້ຂັ້ນເທິງຕົນ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງໜ່ວຍງານກວດກາຄົນເຂົ້າ-ອອກເມືອງ**

ໜ່ວຍງານກວດຄົນເຂົ້າ-ອອກເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາເອກະສານການເດີນທາງທຸກປະເພດ ຂອງພະນັກງານຂັບລົດ ແລະ ພະນັກງານປະຈຳລົດ;

2. ຢຸດ ຫຼື ໂຈະ ການເດີນທາງເຂົ້າ-ອອກ ສປປ ລາວ ທີ່ບໍ່ມີເງື່ອນໄຂຄົບຖ້ວນ;

3. ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສືບສວນ-ສອບສວນ ຕາມຂັ້ນຕອນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການຢູ່ໃນຂອບເຂດທ່າບົກ;

4. ເຂົ້າຮ່ວມການກວດກາ ດ້ວຍເຄື່ອງສາຍລັງສີ (X-RAY) ແລະ ສິນຄ້າຮ່ວມ ກັບໜ່ວຍງານອື່ນທີ່ປະຈຳທ່າບົກ;

5. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງໜ່ວຍງານກວດຄົນເຂົ້າ-ອອກເມືອງ ໃຫ້ຂັ້ນເທິງຕົນ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ທີ່ດິນຂອງທ່າບົກ

### ມາດຕາ 42 ການກຳນົດທີ່ດິນຂອງທ່າບົກ

ກ່ອນຈະຮັບຮອງບົດສຶກສາຄວາມເປັນໄປໄດ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການກຳນົດທີ່ດິນຂອງທ່າບົກ ໂດຍໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ.

### ມາດຕາ 43 ການປັກຫຼັກໝາຍເຂດຂອງທ່າບົກ

ພາຍຫຼັງໄດ້ເຊັນສັນຍາພັດທະນາທ່າບົກແລ້ວ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາ ໃນການສຳຫຼວດວັດແທກສ້າງແຜນວາດ ຫຼື ແຜນທີ່ ແລະ ປັກຫຼັກໝາຍເຂດທ່າບົກທີ່ໄດ້ຮັບສຳປະທານ.

### ມາດຕາ 44 ການອອກໃບຢັ້ງຢືນການນຳໃຊ້ທີ່ດິນ

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມອອກໃບຢັ້ງຢືນການນຳໃຊ້ທີ່ດິນ ໃຫ້ແກ່ຜູ້ພັດທະນາທ່າບົກໂດຍສອດຄ່ອງກັບກົດໝາຍວ່າດ້ວຍທີ່ດິນ.

### ມາດຕາ 45 ການນຳໃຊ້ພື້ນທີ່ດິນ

ຜູ້ພັດທະນາທ່າບົກ ຕ້ອງສ້າງແຜນນຳໃຊ້ທີ່ດິນໃນການນຳໃຊ້ພື້ນທີ່ດິນເຂົ້າໃນເປົ້າໝາຍການດຳເນີນທຸລະກິດໂດຍກົງ ບໍ່ໃຫ້ເກີນແປດສິບສ່ວນຮ້ອຍ (80%) ຂອງເນື້ອທີ່ທັງໝົດ ສ່ວນທີ່ເຫຼືອໃຫ້ພັດທະນາເປັນພື້ນທີ່ ສາທາລະນະປະໂຫຍດເປັນຕົ້ນສວນສາທາລະນະ ແລະ ພື້ນທີ່ສີຂຽວ.

### ມາດຕາ 46 ການທົດແທນຄ່າເສຍຫາຍ

ລັດ ສາມາດໂອນເອົາສິດນຳໃຊ້ທີ່ດິນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອກຳນົດເປັນທີ່ດິນຂອງທ່າບົກ ແຕ່ຈະມອບໃຫ້ຜູ້ພັດທະນາທ່າບົກເປັນຜູ້ຊົດເຊີຍ ຫຼື ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 8
## ຄ່າທຳນຽມ ແລະ ຄ່າບໍລິການໃນທ່າບົກ

### ມາດຕາ 47 ຄ່າທຳນຽມ ແລະ ຄ່າບໍລິການໃນທ່າບົກ

ຄ່າທຳນຽມ ແລະ ຄ່າບໍລິການ ໃນທ່າບົກ ມີ ດັ່ງນີ້:

1. ຄ່າທຳນຽມ ແລະ ຄ່າບໍລິການຂອງພາກລັດ ເປັນຕົ້ນ ຄ່າລົດເຂົ້າ-ອອກຜ່ານທ່າບົກ, ຂຶ້ນທະບຽນພິມສັດ, ວີໄຈ;

2. ຄ່າບໍລິການຂອງຜູ້ພັດທະນາທ່າບົກ ແລະ ຜູ້ລົງທຶນກິດຈະກິດຈະການ ເປັນຕົ້ນ ຄ່າຍົກຍໍ, ຄ່າຂົນຖ່າຍ, ຄ່າຝາກສາງ, ຄ່າຈອດລົດຂົນສົ່ງ, ຄ່າຝາກຕູ້ສິນຄ້າ.

**ມາດຕາ 48 ການເກັບຄ່າທຳນຽມ ແລະ ຄ່າບໍລິການທ່າບົກໃນທ່າບົກ**

ອັດຕາ ແລະ ການເກັບຄ່າທຳນຽມ ແລະ ຄ່າບໍລິການ ຂອງພາກລັດ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດທີ່ໄດ້ກຳນົດໄວ້ ໃນແຕ່ລະໄລຍະ.

ອັດຕາ ແລະ ການເກັບຄ່າບໍລິການ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການຢູ່ໃນທ່າບົກ ໃຫ້ພວກກ່ຽວຄົ້ນຄວ້ານຳສະເໜີຕໍ່ ກະຊວງໂຍທາທິການ ແລະ ຂົນສົ່ງໂດຍປະສານສົມທົບກັບ ກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າເພື່ອສະເໜີລັດຖະບານພິຈາລະນາຮັບຮອງ.

ຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການທ່າບົກ ຕ້ອງກຳນົດ ແລະ ຕິດປະກາດຄ່າທຳນຽມ ແລະ ຄ່າບໍລິການເປັນເງິນກີບ, ຮັບຊຳລະເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ດ້ວຍການນຳໃຊ້ອັດຕາແລກປ່ຽນຂອງທະນາຄານທຸລະກິດໃດໜຶ່ງທີ່ຕັ້ງຢູ່ ສປປ ລາວ.

## ໝວດທີ 9
## ຂໍ້ຫ້າມ

**ມາດຕາ 49 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ເຂົ້າ, ບຸກລຸກ ຫຼື ປຸກສ້າງ ຢູ່ພື້ນທີ່ໃນຂອບເຂດຂອງທ່າບົກ ໂດຍບໍ່ໄດ້ຮັບອະນຸຍາດ;
2. ທັບມ້າງ, ທຳລາຍ ສິ່ງປຸກສ້າງ ຫຼື ຊັບສິນ ໃນຂອບເຂດທ່າບົກ;
3. ຂົນສົ່ງວັດສະດຸກໍ່ສ້າງ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 50 ຂໍ້ຫ້າມສຳລັບຜູ້ພັດທະນາທ່າບົກ**

ຫ້າມ ຜູ້ພັດທະນາທ່າບົກ ມີພຶດຕິກຳ ດັ່ງນີ້:

1. ເອົາ ຫຼື ນຳໃຊ້ ພື້ນທີ່ສາທາລະນະ, ສິ່ງກໍ່ສ້າງ, ສິ່ງປຸກສ້າງ ແລະ ຊັບສິນອື່ນຂອງລັດໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ເອົາໃບອະນຸຍາດສ້າງຕັ້ງທ່າບົກຂອງຕົນໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ;
3. ປິດທ່າບົກ, ນຳໃຊ້ທ່າບົກເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ດຳເນີນທຸລະກິດທ່າບົກບໍ່ຖືກຕ້ອງຕາມສັນຍາສຳປະທານ ແລະ ກົດໝາຍ;
5. ສຳຫຼວດ-ອອກແບບ ແລະ ກໍ່ສ້າງສິ່ງປຸກສ້າງ ບໍ່ສອດຄ່ອງກັບແຜນຜັງເຕັກນິກ ທີ່ໄດ້ຮັບຮອງ;
6. ຜູກຂາດການບໍລິການ, ການນຳເຂົ້າ, ການສົ່ງອອກ ແລະ ການໃຫ້ບູລິມະສິດໃນການບໍລິການແກ່ບຸກຄົນ ຫຼື ພາກສ່ວນໃດໜຶ່ງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 51 ຂໍ້ຫ້າມສຳລັບຜູ້ລົງທຶນກິດຈະການ**

ຫ້າມ ຜູ້ລົງທຶນກິດຈະການໃນທ່າບົກມີພຶດຕິກຳ ດັ່ງນີ້:

1. ໃຫ້ເຊົ່າ ຫຼື ໂອນກິດຈະການ ໃຫ້ຜູ້ທີ່ບໍ່ມີໃບອະນຸຍາດດຳເນີນທຸລະກິດ ແລະ ບໍ່ໄດ້ຮັບການເຫັນດີຈາກຜູ້ພັດທະນາ ແລະ ຄະນະຄຸ້ມຄອງທ່າບົກ;
2. ປິດກິດຈະການໃນທ່າບົກ, ນຳໃຊ້ກິດຈະການໃນທ່າບົກໃນເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບການເຫັນດີຈາກຜູ້ພັດທະນາ ແລະ ຄະນະຄຸ້ມຄອງທ່າບົກ;
3. ດຳເນີນກິດຈະການບໍ່ຖືກຕ້ອງ ຕາມສັນຍາດຳເນີນທຸລະກິດກັບຜູ້ພັດທະນາ ແລະ ໃບອະນຸຍາດດຳເນີນທຸລະກິດ;
4. ຜູກຂາດ ແລະ ໃຫ້ບູລິມະສິດໃນການບໍລິການແກ່ບຸກຄົນ ຫຼື ພາກສ່ວນໃດໜຶ່ງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 52 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ, ເປັນພະນັກງານວິຊາການໃຫ້ທຸລະກິດທ່າບົກ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະກ່ຽວກັບທ່າບົກ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ, ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງຂອງຜູ້ດຳເນີນທຸລະກິດ ກ່ຽວກັບການຂົນສົ່ງທາງບົກ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ການຄຸ້ມຄອງ ແລະ ກວດກາວຽກງານທ່າບົກ

**ມາດຕາ 53 ອົງການຄຸ້ມຄອງ ແລະ ກວດກາວຽກງານທ່າບົກ**

ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບ ຄຸ້ມຄອງ ແລະ ກວດກາວຽກງານທ່າບົກໂດຍມີການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາວຽກງານທ່າບົກປະກອບດ້ວຍ:

1. ຂະແໜງການໂຍທາທິການ ແລະ ຂົນສົ່ງ;
2. ຂະແໜງການການເງິນ;
3. ຂະແໜງການກະສິກຳ ແລະ ປ່າໄມ້;
4. ຂະແໜງການສາທາລະນະສຸກ;
5. ຂະແໜງການປ້ອງກັນຄວາມສະຫງົບ.

**ມາດຕາ 54 ສິດ ແລະ ໜ້າທີ່ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ຂະແໜງການໂຍທາທິການ ແລະຂົນສົ່ງມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານທ່າບົກ ເພື່ອສະເໜີລັດຖະບານພິຈາລະນາ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບວຽກງານທ່າບົກ ໃຫ້ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ຄົ້ນຄວ້າ ສ້າງນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທ່າບົກຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

4. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມກວດກາການດຳເນີນວຽກງານທ່າບົກ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການ ໃຫ້ສອດຄ່ອງກັບສັນຍາສຳປະທານ, ສັນຍາດຳເນີນທຸລະກິດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບໂຄງການລົງທຶນພັດທະນາທ່າບົກ;

6. ຄົ້ນຄວ້າ ແລະ ພິຈາລະນາ ບັນດາກິດຈະການທີ່ນອນຢູ່ໃນທ່າບົກ;

7. ປະສານສົມທົບກັບກະຊວງທີ່ກ່ຽວຂ້ອງ ແຕ່ງຕັ້ງຄະນະຄຸ້ມຄອງທ່າບົກ;

8. ກຳນົດໜ້າວຽກ ແລະ ຮັບຮອງການສຶກສາຄວາມເປັນໄປໄດ້ ກ່ຽວກັບການພັດທະນາທ່າບົກ;

9. ອອກໃບອະນຸຍາດດຳເນີນທຸລະກິດທ່າບົກ ແລະ ກິດຈະການລົງທຶນ ໃນທ່າບົກ;

10.ຄົ້ນຄວ້າ, ກຳນົດໂຄງສ້າງລາຄາການບໍລິການ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນກິດຈະການຢູ່ໃນທ່າບົກ ແລະ ລວມທັງດັດແກ້ລາຄາຄ່າບໍລິການທ່າບົກ;

11. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບທ່າບົກ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານທ່າບົກ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງຂະແໜງການການເງິນ**

ຂະແໜງການການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານພາສີຢູ່ທ່າບົກ;

2. ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານພາສີຢູ່ທ່າບົກໃຫ້ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ສະເໜີແຕ່ງຕັ້ງເຈົ້າໜ້າທີ່ພາສີ ເຂົ້າໃນຄະນະຄຸ້ມຄອງທ່າບົກ;

4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງເຈົ້າໜ້າທີ່ພາສີ ປະຈຳຢູ່ໜ່ວຍງານພາສີ ທີ່ປະຈຳຢູ່ທ່າບົກ;

5. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາທ່າບົກ,ການສ້າງຄວາມເຂັ້ມແຂງ ໃຫ້ແກ່ການຈັດເກັບພາສີ ແລະ ລາຍຮັບອື່ນຢູ່ທ່າບົກ ໃຫ້ຖືກຕ້ອງ, ຄົບຖ້ວນ, ວ່ອງໄວ ແລະ ທັນສະໄໝ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານພາສີຢູ່ທ່າບົກໃຫ້ຂັ້ນເທິງຕົນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງຂະແໜງການກະສິກຳ ແລະ ປ່າໄມ້**

ຂະແໜງການກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກັກກັນພືດ-ສັດຢູ່ທ່າບົກ;

2. ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກັກກັນພືດ-ສັດ ຢູ່ທ່າບົກ ໃຫ້ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ສະເໜີແຕ່ງຕັ້ງເຈົ້າໜ້າທີ່ຂອງຂະແໜງການຕົນ ເຂົ້າໃນຄະນະຄຸ້ມຄອງທ່າບົກ;

4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ເຈົ້າໜ້າທີ່ຂອງຕົນ ປະຈຳຢູ່ທ່າບົກ;

5. ຮ່ວມມື ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາທ່າບົກ, ການສ້າງຄວາມເຂັ້ມແຂງ ໃຫ້ແກ່ການກວດກາ, ເຝົ້າລະວັງຄວາມສ່ຽງ, ການຄວບຄຸມການເຄື່ອນຍ້າຍ, ການສ້າງສະຖານທີ່ກັກກັນພືດ-ສັດ ໃຫ້ຖືກຕ້ອງ, ປອດໄພ ແລະ ທັນສະໄໝ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກັກກັນພືດ-ສັດຢູ່ທ່າບົກ ໃຫ້ຂັ້ນເທິງຕົນຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງຂະແໜງການສາທາລະນະສຸກ**

ຂະແໜງການສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່ ຢູ່ທ່າບົກ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານອາຫານ, ຢາ ແລະ ຄວບຄຸມພະຍາດຢູ່ທ່າບົກ ໃຫ້ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ສະເໜີແຕ່ງຕັ້ງເຈົ້າໜ້າທີ່ຂະແໜງການຂອງຕົນ ເຂົ້າໃນຄະນະຄຸ້ມຄອງທ່າບົກ;

4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ເຈົ້າໜ້າທີ່ຂອງຕົນ ປະຈຳຢູ່ທ່າບົກ;

5. ຮ່ວມມື ແລະ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາທ່າບົກ, ການສ້າງຄວາມເຂັ້ມແຂງ ໃຫ້ແກ່ການກວດກາ, ເຝົ້າລະວັງຄວາມສ່ຽງ, ການຄວບຄຸມການເຄື່ອນຍ້າຍ,ການສ້າງສະຖານທີ່ກວດກາອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່ ໃຫ້ຖືກຕ້ອງ, ປອດໄພ ແລະ ທັນສະໄໝ;

6. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານອາຫານ, ຢາ ແລະ ຄວບຄຸມພະຍາດຕິດຕໍ່ຢູ່ທ່າບົກໃຫ້ຂັ້ນເທິງຕົນ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 58 ສິດ ແລະ ໜ້າທີ່ ຂອງຂະແໜງການປ້ອງກັນຄວາມສະຫງົບ**

ຂະແໜງການປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບຢູ່ທ່າບົກ;

2. ໂຄສະນາເຜີຍແຜ່ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບຢູ່ທ່າບົກ ໃຫ້ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ຄຸ້ມຄອງ, ຊີ້ນຳ, ຕິດຕາມ, ບັນຊາ, ກວດກາ ແລະ ປະເມີນຜົນວຽກງານເຂົ້າ-ອອກຢູ່ທ່າບົກ;

4. ຢຸດ ຫຼື ໂຈະ ການເດີນທາງຂອງຍານພາຫະນະ, ບຸກຄົນ, ກຸ່ມຄົນ ຖ້າມີຂໍ້ມູນຫຼັກຖານ ກ່ຽວກັບການລະເມີດກົດໝາຍ ລວມທັງຄວາມເປັນອັນຕະລາຍຂອງວັດຖຸປະກອນ ແລະ ສິ່ງຂອງຕ່າງໆ;

5. ສະເໜີແຕ່ງຕັ້ງເຈົ້າໜ້າທີ່ຂະແໜງການຂອງຕົນ ເຂົ້າໃນຄະນະຄຸ້ມຄອງທ່າບົກ;

6. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ເຈົ້າໜ້າທີ່ຂອງຕົນ ປະຈຳຢູ່ທ່າບົກ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບຢູ່ທ່າບົກ ໃຫ້ຂັ້ນເທິງຕົນຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 59 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນແລະອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະປະສານສົມທົບກັບອົງການຄຸ້ມຄອງ ແລະ ກວດກາວຽກງານທ່າບົກ, ຄະນະຄຸ້ມຄອງທ່າບົກ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 60 ເນື້ອໃນກວດກາ**

ການກວດກາວຽກງານທ່າບົກ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທ່າບົກ;

2. ກວດກາການຈັດຕັ້ງປະຕິບັດ ບົດບັນທຶກຄວາມເຂົ້າໃຈ, ສັນຍາສຳປະທານ ແລະ ເອກະສານອື່ນທີ່ກ່ຽວຂ້ອງ;

3. ການປະຕິບັດສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ຮັບຜິດຊອບວຽກງານທ່າບົກ;

4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານທ່າບົກ.

**ມາດຕາ 61 ຮູບການການກວດກາ**

ການກວດກາວຽກງານທ່າບົກ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າ ໝາຍຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 62 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການພັດທະນາ, ຄຸ້ມຄອງ, ລົງທຶນ ແລະ ການບໍລິການອຽກງານທ່າບົກທີ່ມີປະສິດທິຜົນ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ດຶງດູດ ແລະ ຊຸກຍູ້ການພັດທະນາທ່າບົກຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

### ມາດຕາ 63 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

### ມາດຕາ 64 ການຈັດຕັ້ງປະຕິບັດ

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບ ກະຊວງການເງິນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 65 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 11 ກໍລະກົດ 2024 ເປັນຕົ້ນໄປ.

ດຳລັດສະບັບນີ້ປ່ຽນແທນ ດຳລັດ ວ່າດ້ວຍທ່າບົກ ສະບັບເລກທີ 513/ລບ, ລົງວັນທີ 04 ສິງຫາ 2021.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ